# ຂໍເອົາເງິນຂອງທ່ານຄືນມາ

ທ່ານອາດມີສິດໄດ້ຮັບເງິນພາສີຄືນສູງເຖິງ **$6,000** ຫຼືຫຼາຍກວ່ານັ້ນ ເມື່ອທ່ານທວງເອົາ ເຄຣດິດພາສີລາຍໄດ້ທີ່ມາຈາກວຽກ ແລະເຄຣດິດພາສີເດັກ **(Earned Income Tax Credit** and **Child Tax Credit)**

**1**

## ເບິ່ງສະຖານທີ່ບໍລິການດ້ານພາສີຟຣີ*

ເບິ່ງທີ່ເວັບໄຊ **irs.treasury.gov/freetaxprep** ຫຼືໂທຣ **800-906-9887**.

**2**

## ເບິ່ງວ່າ ທ່ານມີສິດຫຼືບໍ່

ເບິ່ງວ່າທ່ານສາມາດຮັບເອົາເງິນໄດ້ຫຼາຍປານໃດທີ່ເວັບໄຊ **eitcoutreach.org/help**.

**3**

## ຍື່ນເສັຽພາສີຂອງທ່ານ

ໄປທີ່ເວັບໄຊຊ່ວຍເຫຼືອດ້ານພາສີຟຣີ ພາຍໃນວັນທີ 15 ເມສາ ເພື່ອຍື່ນເສັຽພາສີຂອງທ່ານ ແລະ ຮັບເອົາເງິນຄືນຈາກພາສີຂອງທ່ານ.

* ທ່ານຍັງສາມາດຂໍເອົາເຄຣດິດພາສີໄດ້ ຖ້າວ່າ ທ່ານບໍ່ສາມາດ ຫາສະຖານທີ່ບໍລິການດ້ານພາສີຟຣີທີ່ຢູ່ໃກ້ທ່ານໄດ້.

### *ທ່ານຈະຍື່ນເສັຽພາສີຂອງທ່ານເມື່ອໃດ?*

ວັນທີ: ເວລາ:

ສະຖານທີ່: ເບີໂທຣະສັບ:

ສໍາລັບຂໍ້ມູນເພີ່ມເຕີມ, ເບິ່ງທີ່ເວັບໄຊ **eitcoutreach.org/help** ຫຼື ໂທຣ IRS ທີ່ເບີໂທຣ **1-800-829-1040.**

GET IT BACK LA

# ຂ້ອຍມີສິດບໍ່?

ເຄຣດິດພາສີລາຍຮັບທີ່ມາຈາກວຽກ ແລະເຄຣດິດພາສີເດັກ ແມ່ນການຊ່ວຍເຫຼືອດ້ານພາສີ ສຳລັບບຸກຄົນທີ່ເຮັດວຽກ. ທ່ານສາມາດເປັນໜີ້ພາສີໜ້ອຍລົງ ແລະອາດໄດ້ຮັບເງິນສົດ ກັບຄືນກໍໄດ້!

ການຂໍເອົາເຄຣດິດເຫຼົ່ານີ້ຈະບໍ່ສົ່ງຜົນກະທົບຕໍ່ສິດທິໄດ້ຮັບຂອງທ່ານສຳລັບການຊ່ວຍເຫຼືອອື່ນໆ ເຊັ່ນ SNAP (ບັດຊື້ອາຫານ), SSI, Medicaid, ການຊ່ວຍເຫຼືອເງິນສົດ, ຫຼື ການຊ່ວຍເຫຼືອດ້ານເຮືອນຫຼວງ. ຖ້າວ່າ ທ່ານໄດ້ເງິນພາສີຄືນ, ມັນຈະບໍ່ຖືກນັບໃສ່ຈຳນວນຊັບສິນ/ແຫຼ່ງເງິນທີ່ກຳນົດໄວ້ຂອງໂຄງການຊ່ວຍເຫຼືອຕ່າງໆ ທີ່ໄດ້ທຶນຈາກຣັຖບານກາງ ສຳລັບໄລຍະ 12 ເດືອນ ຫຼັງຈາກໄດ້ຮັບເງິນພາສີຄືນແລ້ວ.

## ຖ້າວ່າ ທ່ານມີລູກ

- ☐ **ອາຍຸ**: ສຳລັບ *EITC*, ເດັກຕ້ອງມີອາຍຸຕ່ຳກວ່າ 19 ປີ ໃນເວລາຮອດສິ້ນປີ 2019 (ນັກຮຽນເຕັມເວລາອາດມີອາຍຸຕ່ຳກວ່າ 24 ປີກໍໄດ້ ແລະເດັກທີ່ພິການຖາວອນ ແລະພິການທັງໝົດ ສາມາດມີອາຍຸເທົ່າໃດກໍໄດ້). ສຳລັບ *CTC*, ເດັກຕ້ອງມີອາຍຸຕ່ຳກວ່າ 17 ປີ ໃນເວລາຮອດສິ້ນປີ 2019.
- ☐ **ທີ່ຢູ່ອາໄສ**: ເດັກຕ້ອງອາໄສຢູ່ກັບທ່ານດົນນານກວ່າເຄິ່ງປີຂອງປີ 2019.
- ☐ **ລາຍໄດ້ສຳລັບປີ 2019**: ສຳລັບ CTC, ຖ້າວ່າ ທ່ານມີລາຍຮັບຫຼາຍກວ່າ $2,500, ທ່ານສາມາດຮຽກຮ້ອງເອົາເຄຣດິດໄດ້ເຖິງ $2,000 ຕໍ່ເດັກໜຶ່ງຄົນ. ສຳລັບ *EITC*, ລາຍຮັບຂອງທ່ານຕ້ອງຕ່ຳກວ່າຈຳນວນທີ່ກຳນົດໄວ້ຂ້າງລຸ່ມນີ້:

| ເດັກ | ໂສດ | ແຕ່ງງານ | EITC ສູງເຖິງ: |
|---|---|---|---|
| 1 | $41,094 | $46,884 | $3,526 |
| 2 | $46,703 | $52,493 | $5,828 |
| 3 ຄົນຂຶ້ນໄປ | $50,162 | $55,952 | $6,557 |

### ສິ່ງທີ່ຄວນຖືເອົາໄປທີ່ ສະຖານບໍລິການພາສີຟຣີ

- ຮູບປະຈຳຕົວທີ່ໃຊ້ການໄດ້
- ບັດປະກັນສັງຄົມ (Social Security Card), ຈົດໝາຍຢັ້ງຢືນເລກປະກັນສັງຄົມ (Social Security Number verification letter), ຫຼື ITIN
- ຟອມ W-2 ຫຼື 1099
- ຟອມ 1095-A

## ຖ້າວ່າ ທ່ານບໍ່ມີລູກ

- ☐ **ອາຍຸ**: ທ່ານຕ້ອງມີອາຍຸລະຫວ່າງ 25 ຫາ 64 ປີ.
- ☐ **ລາຍໄດ້ສຳລັບປີ 2019**: ຖ້າວ່າ ທ່ານມີລາຍຮັບໜ້ອຍກວ່າ $15,570 ($21,370 ຖ້າວ່າແຕ່ງງານແລ້ວ), ທ່ານກໍສາມາດໄດ້ຮັບເງິນຄືນ EITC ສູງເຖິງ $529.

## ຖ້າວ່າ ທ່ານບໍ່ແມ່ນພົນລະເມືອງ ສະຫະຣັຖອາເມລິກາ

- ☐ **EITC**: ທ່ານ, ຄູ່ສົມລົດຂອງທ່ານ, ແລະລູກຄົນໃດໆ ທີ່ທ່ານຂໍເງິນພາສີຄືນ ຕ້ອງມີເລກປະກັນສັງຄົມທີ່ໃຊ້ການໄດ້.
- ☐ **CTC**: ທ່ານ ແລະຄູ່ສົມລົດຂອງທ່ານຕ້ອງມີເລກປະກັນສັງຄົມ ຫຼື ເລກປະຈຳຕົວຜູ້ເສຍພາສີ (ITIN). ເດັກຄົນໃດໆ ທີ່ທ່ານຮຽກຮ້ອງໃຫ້ຕ້ອງມີເລກປະກັນສັງຄົມ.

## ປະກັນໄພສຸຂະພາບ

ທ່ານອາດມີສິດເໝາະສົມທີ່ຈະໄດ້ຮັບປະກັນສຸຂະພາບແບບບໍ່ເສຍຄ່າ ຫຼື ລາຄາຖືກ ກັບ Medicaid ຫຼື ກັບເຄຣດິດເງິນຄືນພາສີ. ລົງທະບຽນເຂົ້າໃນ Medicaid ຍາມໃດກໍໄດ້ ຫຼື ທີ່ HealthCare.gov ລະຫວ່າງວັນທີ 1 ເດືອນພະຈິກ 2019 ຫາ ວັນທີ 15 ທັນວາ 2019. ຮັບເອົາຂໍ້ມູນເພີ່ມເຕີມໄດ້ທີ່ **1-800-318-2596** ຫຼື **www.HealthCare.gov**.